ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ລາວ ມີແຜນເຂົ້າເຖິງການບໍລິການດ້ານການເງິນ




ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບລັດຖະບານອົດສະຕຣາລີ ແລະ ກອງທຶນເພື່ອການພັດທະນາ ອົງການສະຫະປະຊາຊາດ (UNCDF) ໄດ້ຈັດຕັ້ງການເປີດໂຕ "ແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ໄລຍະ 8 ປີ (2018-2025)" ທີ່ໂຮງແຮມ ລາວພລາຊາ ໃນວັນທີ 12 ມັງກອນ 2021 ໂດຍການໃຫ້ກຽດເຂົ້າຮ່ວມຂອງ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ, ພ້ອມດ້ວຍທ່ານນາງ Jane Chandler ອຸປະທູດອົດສະຕຣາລີ ປະຈຳ ສປປ ລາວ ແລະ ເຂົ້າຮ່ວມຜ່ານລະບົບອອນລາຍຂອງທ່ານນາງ ດຣ. Kameshnee Naidoo, Global Program Manager ຈາກອົງການກອງທຶນເພື່ອການພັດທະນາ ອົງການສະຫະປະຊາຊາດ; ມີຜູ້ຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ, ບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງກັບແຜນດຳເນີນງານດັ່ງກ່າວ.

ກອງປະຊຸມຄັ້ງນີ້ ມີຈຸດປະສົງເຜີຍແຜ່ຄວາມໝາຍຄວາມສຳຄັນ ແລະ ໜ້າວຽກຂອງແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ (2018-2025) ທີ່ໄດ້ຮັບການຮັບຮອງໂດຍ ທຫລ ໃນເດືອນ ສິງຫາ 2019; ການເຂົ້າເຖິງການບໍລິການທາງດ້ານການເງິນ ມີຄວາມສຳຄັນເນື່ອງຈາກສາມາດປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍການ

ສ້າງວຽກເຮັດງານທຳ, ປະກອບສ່ວນໃນຫັນເປັນລະບົບເສດຖະກິດດິຈິຕອນ, ຊ່ວຍເຫຼືອປະຊາຊົນໃນເວລາເຈັບເປັນ, ຈາກໄພທຳມະຊາດ ແລະ ອຸປະຕິເຫດ. ນອກຈາກນັ້ນ, ການເຂົ້າເຖິງການບໍລິການທາງດ້ານການເງິນ ຍັງຊ່ວຍໃນການສົ່ງເສີມບົດບາດຂອງແມ່ຍິງ, ການເພີ່ມລາຍຮັບ ແລະການສົ່ງເສີມການຜະລິດ. ສິ່ງເຫຼົ່ານີ້ ມີຜົນປະໂຫຍດຈາກການເຂົ້າເຖິງການບໍລິການທາງດ້ານການເງິນທີ່ມີຕໍ່ບຸກຄົນ, ຄອບຄົວ, ຊຸມຊົນ ແລະ ຕໍ່ປະຊາຊົນລາວທົ່ວປະເທດ.

ສະນັ້ນ, ທຫລ ຈຶ່ງເປັນເຈົ້າການຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ສ້າງແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນ; ແຜນດຳເນີນງານດັ່ງກ່າວ ຈະເປັນແນວທາງເຮັດໃຫ້ປະຊາຊົນສາມາດເຂົ້າເຖິງຜະລິດຕະພັນ ແລະ ການບໍລິການທາງດ້ານການເງິນໃຫ້ນັບມື້ນັບທົ່ວເຖິງທັງທາງກວ້າງ ແລະ ທາງເລິກ ແລະ ໄດ້ຮັບຜົນປະໂຫຍດຈາກການເຂົ້າເຖິງຢ່າງຍືນຍົງ. ດັ່ງນັ້ນ, ໃນທ້າຍປີ 2014 ທຫລ ໄດ້ຮ່ວມກັບສູນສະຖິຕິແຫ່ງຊາດດຳເນີນການສຳຫຼວດ ການເຂົ້າເຖິງການບໍລິການທາງດ້ານການເງິນຢູ່ ສປປ ລາວ ໂດຍຜ່ານຂັ້ນຕອນ ແລະ ຂະບວນການຂອງການເຂົ້າເຖິງການບໍລິການທາງດ້ານການເງິນ ທີ່ສາມາດເປັນໄປໄດ້ ຊຶ່ງເປັນແຜນງານໜຶ່ງທີ່ຢູ່ພາຍໃຕ້ໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃຫ້ຫຼາຍ.

ຜ່ານຂະບວນການສຶກສາຄົ້ນຄ້ວາ ແລະ ປຶກສາຫາລືຮ່ວມກັບບັນດາຜູ້ມີສ່ວນຮ່ວມຫຼາຍຄັ້ງ ທຫລ ຈຶ່ງໄດ້ກຳນົດເອົາ 5 ວຽກງານບູລິມະສິດໃນແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ຊຶ່ງປະກອບດ້ວຍການປັບປຸງການສະໜອງສິນເຊື່ອ; ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຊົມໃຊ້ທາງການເງິນ; ການສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນບ້ານ; ປັບປຸງລະບົບການຊຳລະ ແລະ ການຂະຫຍາຍຕາໜ່າງການບໍລິການທາງດ້ານການເງິນ. ການເຂົ້າເຖິງການບໍລິການທາງດ້ານການເງິນ ມີລັກສະນະກວ້າງຂວາງ, ສະນັ້ນ ເພື່ອໃຫ້ບັນລຸຕາມວິໄສທັດທີ່ໄດ້ກ່າວກ່ອນໜ້ານີ້ ຈະຕ້ອງຈັດຕັ້ງປະຕິບັດ ໂດຍເບິ່ງຈາກພາບລວມ ແລະ ລະບົບນິເວດທັງໝົດຂອງວຽກງານດັ່ງກ່າວ ຊຶ່ງກວມເອົາການອອມ, ສິນເຊື່ອທີ່ມີຄຸນນະພາບ, ການປະກັນໄພ, ການປົກປ້ອງ ແລະ ການສົ່ງເສີມບົດບາດຂອງຜູ້ຊົມໃຊ້ທາງດ້ານການເງິນ, ການສົ່ງເສີມສະຖາບັນການເງິນເຄິ່ງທາງການ ຫຼື ກອງທຶນບ້ານ ເພື່ອເຮັດໃຫ້ເຂົາເຈົ້າມີຄວາມເຂັ້ມແຂງ ແລະ ຍືນຍົງ, ການພັດທະນາລະບົບການຊຳລະ ແລະ ການຂະຫຍາຍສະຖາບັນການເງິນໃຫ້ໄປສູ່ຂົງເຂດທີ່ມີຄວາມຕ້ອງການ ໂດຍສະເພາະເຂດຊົນນະບົດ, ດ້ວຍການປັບປຸງລະບຽບການ, ການສົ່ງເສີມພາກສ່ວນເອກກະຊົນ ແລະ ການເຄື່ອນໄຫວທາງດ້ານເສດຖະກິດ ເພື່ອສ້າງຄວາມຕ້ອງການສຳລັບການເຂົ້າເຖິງການບໍລິການທາງດ້ານການເງິນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ